ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ກົມການເມືອງສູນກາງພັກ

ເລກທີ : 03 /ກມສພ

ນະຄອນຫຼວງວຽງຈັນ, ວັນທີ 15 FEB 2012

# ມະຕິຂອງກົມການເມືອງ

## ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ

- ອີງຕາມແຜນດຳເນີນງານ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IX ສະບັບເລກທີ 01/ຄບສພ, ລົງວັນທີ 01 ມິຖຸນາ 2011.
- ອີງຕາມມະຕິຂອງກອງປະຊຸມຄົບຄະນະ ຂອງຄະນະບໍລິຫານງານສູນກາງ ຄັ້ງທີ 3 (ສະໄໝທີ IX) ໃນວັນທີ 14-18 ພະຈິກ 2011.

ກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ

ອອກມະຕິຕົກລົງ:

ກ. ຈຸດປະສົງ.

1. ເພື່ອສືບຕໍ່ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໂດຍສະເພາະແມ່ນ ທິດນຳ "ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ" ໃຫ້ເປັນອັນລະອຽດ, ສາມາດເປັນບ່ອນອີງໃຫ້ແກ່ການອອກນິຕິກຳ ແລະ ນະໂຍບາຍຂອງລັດ ແນໃສ່ສ້າງລັດປະຊາທິປະໄຕປະຊາຊົນ ໃຫ້ມີຄວາມໝັ້ນຄົງຍິ່ງໆຂຶ້ນ.

2. ເພື່ອເພີ່ມທະວີບົດບາດການນຳພາຮອບດ້ານ ຂອງຄະນະພັກ ຕິດພັນກັບການເສີມຂະຫຍາຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງລັດ-ຄຸ້ມຄອງເສດຖະກິດສັງຄົມ ຂອງອົງການປົກຄອງທ້ອງຖິ່ນ; ເຮັດໃຫ້ການບໍລິຫານ ແລະ ການຄຸ້ມຄອງລັດມີຄວາມຄ່ອງຕົວຕິດແທດກັບການເພີ່ມທະວີ ວຽກງານກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດຮອບດ້ານ ກໍຄືການສ້າງບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ ຕາມຄຳສັ່ງແນະນຳເລກທີ 03 ຂອງກົມການເມືອງ.

3. ເພື່ອເສີມຂະຫຍາຍຫລັກການລວມສູນປະຊາທິປະໄຕ ໃນການນຳພາຂອງພັກ ແລະ ຫລັກການລວມສູນເປັນເອກະພາບ ໃນການຄຸ້ມຄອງລັດ ໃຫ້ສອດຄ່ອງກັບເງື່ອນໄຂໃໝ່ ແລະ ຄວາມຮຽກຮ້ອງຕ້ອງການໃໝ່ ຂອງການພັດທະນາປະເທດ, ປະຕິບັດຄາດໝາຍສູ້ຊົນແກ້ໄຂຄວາມທຸກຍາກ ຂອງຄອບຄົວໃຫ້ຍັງເຫລືອບໍ່ເກີນ 10% ແລະ ບັນລຸເປົ້າໝາຍສະຫັດສະວັດ ດ້ານການພັດທະນາ ໃນປີ 2015; ເຮັດໃຫ້ປະເທດຫລຸດພົ້ນຈາກສະຖານະພາບດ້ອຍພັດທະນາ ໃນປີ 2020.

ຂ. <u>ທັດສະນະພື້ນຖານ</u>.

- ບົນພື້ນຖານການສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນ ຈາກຂະບວນການຈັດຕັ້ງປະຕິບັດທິດນຳ " ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍແຜນການ-ການເງິນ, ສ້າງບ້ານເປັນຫົວໜ່ວຍຈັດຕັ້ງປະຕິບັດ " ຕິດພັນກັບຄຳສັ່ງແນະນຳເລກທີ 09 ຂອງກົມການເມືອງສູນກາງພັກ ແລະ ດຳລັດເລກທີ 01/ນຍ ໃນຊຸມປີຜ່ານມານັ້ນ, ພວກເຮົາສືບຕໍ່ຈັດຕັ້ງປະຕິບັດທິດນຳຍຸດທະສາດສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ໂດຍຢຶດໝັ້ນໃນທັດສະນະພື້ນຖານ ດັ່ງນີ້:

1). ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ແມ່ນລາຍການຈຳເປັນພາວະວິໄສ ໃນຍຸດທະສາດ [illegible] ບາດກ້າວບຸກທະລຸໃນດ້ານນີ້ໃຫ້ເປັນຈິງ ໂດຍສະເພາະ ແມ່ນໃນການສ້າງເມືອງ ແລະ ສ້າງບ້ານ.

2). ການສ້າງແຂວງ, ເມືອງ ແລະ ບ້ານ ຕາມທິດນຳດັ່ງກ່າວ ແມ່ນວຽກຍາວນານ, ມີຄວາມສັບສົນ ແລະ ລະອຽດອ່ອນ, ສະນັ້ນ ຕ້ອງເຮັດຢ່າງມີແຜນການ ມີບາດກ້າວຕໍ່ເນື່ອງ, ມີຄວາມຮອບຄອບ, ເຮັດມີວິທະຍາສາດ ແລະ ມີການຊີ້ນຳຢ່າງໃກ້ຊິດ ໂດຍເລີ່ມຈາກດ້ານທີ່ຈຳເປັນ ແລະ ມີເງື່ອນໄຂເຮັດໄດ້; ມີການເຮັດທົດລອງ ເພື່ອຖອດຖອນບົດຮຽນ ແລະ ສືບຕໍ່ປັບປຸງເສີມຂະຫຍາຍໄປເລື້ອຍໆ.

3). ການສ້າງແຂວງ, ເມືອງ ແລະ ບ້ານ ຕາມທິດນຳດັ່ງກ່າວ ຕ້ອງດຳເນີນໄປບົນພື້ນຖານຫລັກການນຳພາລວມສູນປະຊາທິປະໄຕຂອງພັກ ແລະ ຫລັກການລວມສູນເປັນເອກະພາບແຫ່ງການຄຸ້ມຄອງລັດ; ກໍຄືລັດຖະທຳມະນູນ ແລະ ກົດໝາຍ. ໃນການຈັດຕັ້ງປະຕິບັດຕົວຈິງນັ້ນທຸກພາກສ່ວນຕ້ອງກຳແໜ້ນທິດນຳ ທີ່ວ່າ "ລວມສູນເຂັ້ມແຂງຈຶ່ງແບ່ງສິດ ແລະ ແບ່ງຂັ້ນຄຸ້ມຄອງໃຫ້ທ້ອງຖິ່ນໄດ້; ໃນຂະນະດຽວກັນນັ້ນ ຖ້າຫາກແບ່ງສິດ ແລະ ແບ່ງຂັ້ນຄຸ້ມຄອງໃຫ້ທ້ອງຖິ່ນໄດ້ຢ່າງຖືກຕ້ອງເໝາະສົມ ກໍຈະເຮັດໃຫ້ ການລວມສູນເຂັ້ມແຂງຂຶ້ນ".

4). ການສ້າງແຂວງ, ເມືອງ ແລະ ບ້ານຕາມທິດນຳດັ່ງກ່າວ ຕ້ອງດຳເນີນໄປພ້ອມໆກັນໃນຫລາຍດ້ານ ເປັນຕົ້ນແມ່ນດ້ານການເມືອງ-ແນວຄິດ, ດ້ານເສດຖະກິດ, ສັງຄົມ-ວັດທະນະທຳການຈັດຕັ້ງກົງຈັກ ແລະ ບຸກຄະລະກອນ, ຕ້ອງບຸກທະລຸຕັ້ງແຕ່ກະຊວງ-ອົງການອ້ອມຂ້າງສູນກາງ

ລົງສູ່ແຂວງ; ຈາກແຂວງລົງສູ່ເມືອງ; ຈາກເມືອງລົງສູ່ບ້ານ ໂດຍມີການປະສານສົມທົບຢ່າງກົມກຽວ ແລະ ສະຫນິດແຫນ້ນລະຫວ່າງຂະແໜງການສາຍຕັ້ງ ກັບຄະນະພັກ-ອົງການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ.

ຄ. ທິດທາງຕົ້ນຕໍ

- ອີງໃສ່ທັດສະນະພື້ນຖານເທິງນັ້ນ,ພວກເຮົາຕ້ອງດຳເນີນການຢ່າງເປັນລະບົບຄົບຊຸດຕາມທິດທາງຕົ້ນຕໍດັ່ງນີ້:

1). ບັນດາກະຊວງ-ອົງການຂັ້ນສູນກາງ ຕ້ອງປະຕິບັດພາລະບົດບາດຄຸ້ມຄອງມະຫາພາກຢ່າງຄົບຖ້ວນ ແລະ ຮັດກຸມ ຕາມທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມ ໃຫຍ່ຄັ້ງທີ IX ຂອງພັກຄື:

1.1. ສຸມໃສ່ຄົ້ນຄ້ວາຜັນຂະຫຍາຍແນວທາງ ກໍຄືມະຕິກອງປະຊຸມໃຫຍ່ຂອງພັກ ແລະ ມະຕິກອງປະຊຸມສູນກາງແຕ່ລະຄັ້ງ ເປັນຍຸດທະສາດ, ເປັນແຜນງານ ເປັນໂຄງການວຽກງານລະອຽດຂອງກະຊວງ-ອົງການຂອງຕົນ ໃຫ້ທັນການ, ຖືກຕ້ອງ, ທັງເປັນເຈົ້າການຄົ້ນຄວ້າຈັດຫາແຫລ່ງທຶນ ແລະ ຊຸກຍູ້, ຕິດຕາມ, ກວດກາຊີ້ນຳ-ບັນຊາການຈັດຕັ້ງປະຕິບັດໃຫ້ເປັນຈິງ.

1.2. ສຸມໃສ່ຄົ້ນຄ້ວາອອກກົດຫມາຍ, ອອກນະໂຍບາຍ ແລະ ລະບຽບການອັນຈຳເປັນສຳລັບຄຸ້ມຄອງຂະແໜງການຂອງຕົນໃຫ້ມີປະສິດທິຜົນ, ພ້ອມກັນນັ້ນ ກໍ່ແກ້ໄຂປັບປຸງກົນໄກ ແລະ ລະບຽບການຕ່າງໆ ທີ່ຍັງກີດຫນ່ວງອັດຕັນໃຫ້ຕົກໄປ.

1.3. ສຸມໃສ່ຂຶ້ນແຜນກຳນົດກໍ່ສ້າງພະນັກງານ ລວມທັງການຝຶກອົບຮົມບຳລຸງຍົກລະດັບໃຫ້ແກ່ພະນັກງານໃນຂະແໜງການຕົນໃນຂອບເຂດທົ່ວປະເທດ ໃຫ້ສາມາດຕອບສະຫນອງຄວາມຕ້ອງການຂອງການພັດທະນາ ໃນແຕ່ລະໄລຍະ.

1.4. ສຸມໃສ່ຄົ້ນຄ້ວາວິທະຍາສາດ ແລະ ເຜີຍແຜ່ແນະນຳການນຳໃຊ້ວິທະຍາສາດວິທະຍາການໃຫມ່ ເຂົ້າໃນການພັດທະນາຂະແໜງການຕົນທັງຢູ່ສູນກາງ ແລະ ທ້ອງຖິ່ນ.

1.5. ສຸມໃສ່ຊ່ວຍຊູຍູ້ຫນູນທ້ອງຖິ່ນ ແລະ ທົວຫນ່ວຍຈຸລະພາກ; ຕິດຕາມກວດກາ ສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນ ການຈັດຕັ້ງປະຕິບັດກົດຫມາຍ, ນະໂຍບາຍ ແລະ ວຽກງານຕ່າງໆຂອງຂະແໜງການ ໃຫ້ດຳເນີນໄປຢ່າງຖືກຕ້ອງສອດຄ່ອງ ແລະ ໄດ້ຮັບຜົນດີ.

- ອີງໃສ່ 5 ພາລະບົດບາດຄຸ້ມຄອງມະຫາພາກດັ່ງກ່າວນັ້ນ ບັນດາກະຊວງ-ອົງການຂັ້ນສູນກາງ ຕ້ອງຄົ້ນຄວ້າປັບປຸງພາລະບົດບາດ ຂອງຕົນຄືນໃໝ່ ແລະ ກວດຄືນບັນດາຄຳສັ່ງ, ຂໍ້ກຳນົດ ແລະ ລະບຽບການຕ່າງໆທີ່ໄດ້ວາງອອກກ່ອນໜ້ານັ້ນ ເພື່ອປັບປຸງໃຫ້ສອດຄ່ອງກັບທິດທາງໃໝ່ນີ້; ພ້ອມກັນນັ້ນ ກໍໃຫ້ຄົ້ນຄວ້າກ່ຽວກັບການມອບສິດ ໃນການຕົກລົງແກ້ໄຂບັນຫາ ແລະ ມອບຄວາມຮັບຜິດຊອບໃນການຄຸ້ມຄອງ, ຈັດຕັ້ງປະຕິບັດບັນດາວຽກວິຊາສະເພາະຂອງຂະແໜງການ ກໍຄື ບັນດາໂຄງການພັດທະນາ (ທັງງົບປະມານ ແລະ ບຸກຄະລະກອນ) ໃຫ້ແກ່ທ້ອງຖິ່ນ (ແຂວງ-ເມືອງ ) ໂດຍຕິດພັນກັບການຈັດສັນ-ແບ່ງປັນຜົນປະໂຫຍດໃຫ້ເໝາະສົມ.

2). ສືບຕໍ່ສ້າງແຂວງເປັນຫົວໜ່ວຍຍຸດທະສາດ.

2.1. ກຳນົດສິດ ແລະ ຄວາມຮັບຜິດຊອບ ດ້ານການຄຸ້ມຄອງ-ບໍລິຫານລັດ, ດ້ານການຄຸ້ມຄອງເສດຖະກິດ-ສັງຄົມ ແລະ ວັດທະນະທຳໃຫ້ແຂວງ ໃນຖານະອົງການປົກຄອງສູງສຸດຂັ້ນທ້ອງຖິ່ນ ໃຫ້ຈະແຈ້ງຕື່ມອີກ ໂດຍໃຫ້ແຂວງມີຄວາມຮັບຜິດຊອບຫລາຍຂຶ້ນ ໃນການຈັດຕັ້ງປະຕິບັດບັນດາວຽກງານວິຊາສະເພາະ ແລະ ໂຄງການພັດທະນາຕ່າງໆ (ນອກຈາກໂຄງການໃຫຍ່ລະດັບຊາດ).

ພ້ອມດຽວກັນນັ້ນ ກໍຕ້ອງຈັດສັນແບ່ງປັນຜົນປະໂຫຍດໃຫ້ສົມຄູ່ກັບຄວາມຮັບຜິດຊອບ ເພື່ອກະຕຸກຊຸກຍູ້ຄວາມເປັນເຈົ້າການຂອງແຂວງ; ສ່ວນແຂວງກໍຕ້ອງຄຳນຶງເຖິງຜົນປະໂຫຍດລວມ ຂອງທົ່ວປະເທດ ແລະ ປະກອບສ່ວນປະຕິບັດພັນທະຕໍ່ສູນກາງ ຕາມລະບຽບການທີ່ກຳນົດໄວ້.

2.2. ກຳນົດກົນໄກ ແລະ ລະບຽບການຄຸ້ມຄອງພະນັກງານປະຈຳການຢູ່ແຂວງ ໄປຕາມທິດມອບສິດໃນການຕົກລົງແຕ່ງຕັ້ງ ຫລື ປົດຕຳແໜ່ງພະນັກງານຂັ້ນຫົວໜ້າພະແນກການຂອງແຂວງລົງໄປໃຫ້ແກ່ເຈົ້າແຂວງ, ແຕ່ຕ້ອງອີງໃສ່ມາດຕະຖານຂອງຕຳແໜ່ງງານ ທີ່ກະຊວງອົງການຂັ້ນສູນກາງວາງອອກ ແລະ ມີການປະສານສົມທົບ ຂໍຄວາມເຫັນເປັນລາຍລັກອັກສອນ ຈາກຂະແໜງການສາຍຕັ້ງ.

ສຳລັບກໍລະນີຂະແໜງການສາຍຕັ້ງ ສົ່ງພະນັກງານລົງເຮັດວຽກປະຈຳການຢູ່ທ້ອງຖິ່ນ ເພື່ອຝຶກຝົນຫັດສຶກສາ ແລະ ບຳລຸງສ້າງພະນັກງານ ໃນຂະບວນການວຽກງານຕົວຈິງ ກໍຕ້ອງສົ່ງມອບໃຫ້ [illegible]
ຕ້ອງຮັບຜິດຊອບຄຸ້ມຄອງຮອບດ້ານຕໍ່ພະນັກງານນັ້ນຕາມລະບຽບການ.

- ບັນດາກະຊວງ-ອົງການອ້ອມຂ້າງສູນກາງມີສິດ ແລະ ມີໜ້າທີ່ຕິດຕາມກວດກາການປະຕິບັດໜ້າທີ່ ຂອງພະນັກງານວິຊາການ ຂອງຂະແໜງການຕົນ ທີ່ເຮັດວຽກປະຈຳການຢູ່ທ້ອງຖິ່ນ, ເປັນຕົ້ນແມ່ນໃຫ້ຄວາມເຫັນຊີ້ນຳ ແລະ ຊ່ວຍບຳລຸງຍົກລະດັບຄວາມຮູ້ຄວາມສາມາດ ທາງດ້ານວິຊາການໃຫ້ສູງຂຶ້ນ; ປຶກສາຫາລືຮ່ວມກັບແຂວງ ໃນການແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບພະນັກງານນັ້ນໆ.

2.3. ຄົ້ນຄວ້າກຳນົດເປັນຫລັກການ ກ່ຽວກັບບັນຫາທີ່ບໍ່ອະນຸຍາດໃຫ້ແຂວງຕົກລົງເອງ ( ບໍ່ມີສິດຕົກລົງ ) ໂດຍສະເພາະແມ່ນໃນດ້ານການຄຸ້ມຄອງ, ການຂຸດຄົ້ນ ແລະ ນຳໃຊ້ແຫລ່ງຊັບພະຍາກອນທຳມະຊາດ; ການຄຸ້ມຄອງ ແລະ ນຳໃຊ້ລາຍຮັບທີ່ເກັບໄດ້ເກີນແຜນງົບປະມານ; ການໃຫ້ເຊົ່າ-ໃຫ້ສຳປະທານ ຫລືຂາຍຊັບສິນ ຂອງລັດ, ການອະນຸມັດ ແລະ ອອກທະບຽນທຸລະກິດ, ການຄຸ້ມຄອງພາຫະນະ ແລະ ສິ່ງສາທາ ລະນະປະໂຫຍດອື່ນໆ...

2.4. ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ ຕ້ອງຕິດພັນກັບການສ້າງຄວາມເຂັ້ມແຂງດ້ານປ້ອງກັນຊາດປ້ອງກັນຄວາມສະຫງົບ ໂດຍໃຫ້ແຂວງມີຄວາມສາມາດຮັບຜິດຊອບທິດໜຶ່ງຂອງປະເທດ.

2.5. ສືບຕໍ່ຄົ້ນຄວ້າກ່ຽວກັບການສ້າງຕັ້ງສະພາປະຊາຊົນແຂວງຂຶ້ນໃນຕໍ່ໜ້າ ໂດຍອີງໃສ່ເງື່ອນໄຂຄວາມສາມາດຕົວຈິງ ກໍຄື ຄວາມຈຳເປັນໃນການເພີ່ມປະສິດທິພາບການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ຢູ່ທ້ອງຖິ່ນ.

3. ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ.

3.1. ການສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານຕ້ອງຕິດພັນກັບການເສີມຂະຫຍາຍບົດບາດນຳພາຮອບດ້ານ ຂອງຄະນະພັກເມືອງ ແລະ ການເພີ່ມທະວີບົດບາດການຄຸ້ມຄອງ-ບໍລິຫານຂອງອົງການປົກຄອງເມືອງ; ກ່ອນອື່ນຫມົດຕ້ອງໃຫ້ເມືອງເປັນຫົວໜ່ວຍແຜນການ ແລະ ເປັນຫົວໜ່ວຍງົບປະມານໜຶ່ງທີ່ຂຶ້ນກັບແຂວງ.

3.2. ກຳນົດສິດ ແລະ ຄວາມຮັບຜິດຊອບດ້ານການຄຸ້ມຄອງ-ບໍລິຫານລັດ, ດ້ານການຄຸ້ມຄອງເສດຖະກິດ-ສັງຄົມ ແລະ ວັດທະນະທຳ ໃຫ້ເມືອງຢ່າງເໝາະສົມຕາມຖານະຂອງຫົວໜ່ວຍແຜນການ ແລະ ງົບປະມານໜຶ່ງຂອງແຂວງ ໂດຍໃຫ້ເມືອງມີຄວາມຮັບຜິດຊອບຫລາຍຂຶ້ນ ໃນການຈັດຕັ້ງປະຕິບັດບັນດາວຽກງານວິຊາສະເພາະ ແລະ ບັນດາໂຄງການພັດທະນາທ້ອງຖິ່ນ ທີ່ຕິດພັນກັບການແກ້ໄຂຄວາມທຸກຍາກ, ການສ້າງບ້ານພັດທະນາ ແລະ ສ້າງຕົວເມືອງນ້ອຍໃນຊົນນະບົດ.

ພ້ອມດຽວກັນນັ້ນ ກໍຕ້ອງຈັດສັນແບ່ງປັນຜົນປະໂຫຍດໃຫ້ເມືອງຢ່າງເໝາະສົມກັບການມອບຄວາມຮັບຜິດຊອບ ທີ່ເພີ່ມຂຶ້ນ ເພື່ອກະຕຸກຊຸກຍູ້ຄວາມຫ້າວຫັນ ເປັນເຈົ້າການ ແລະ ຄວາມຮັບຜິດຊອບຂອງເມືອງ; ສ່ວນເມືອງກໍຕ້ອງຄຳນຶງເຖິງຜົນປະໂຫຍດລວມຂອງແຂວງ ແລະ ປະກອບສ່ວນປະຕິບັດພັນທະຕໍ່ແຂວງ.

3.3. ໃຫ້ຄົ້ນຄວ້າກຳນົດເປັນຫລັກການກ່ຽວກັບບັນຫາທີ່ບໍ່ອະນຸຍາດໃຫ້ເມືອງຕົກລົງເອງ ( ບໍ່ມີສິດຕົກລົງ ) ໂດຍສະເພາະແມ່ນໃນດ້ານການຄຸ້ມຄອງ, ການຂຸດຄົ້ນ ແລະ ນຳໃຊ້ແຫລ່ງຊັບພະຍາກອນທຳມະຊາດ, ການຄຸ້ມຄອງແຫລ່ງລາຍຮັບ ແລະ ລາຍຈ່າຍງົບປະມານ, ການຄຸ້ມ ຄອງຊັບສິນຂອງລັດ ແລະ ສິ່ງສາທາລະນະປະໂຫຍດ, ການອອກອະນຸຍາດ ແລະ ໃຫ້ທະບຽນດຳເນີນທຸລະກິດ...

3.4. ກຳນົດກົນໄກ ແລະ ລະບຽບການຄຸ້ມຄອງພະນັກງານ ໃຫ້ເມືອງຢ່າງເໝາະສົມ; ໂດຍໃຫ້ເຈົ້າເມືອງມີສິດແຕ່ງຕັ້ງ ຫລື ປົດຕຳແໜ່ງພະນັກງານ ຂັ້ນຫົວໜ້າຫ້ອງການເມືອງລົງໄປ ໂດຍອີງໃສ່ມາດຕະຖານ ຂອງຕຳແໜ່ງງານທີ່ວາງໄວ້ ແລະ ມີການປະສານສົມທົບຂໍຄວາມເຫັນເປັນລາຍລັກອັກສອນຈາກແຂວງ.

3.5. ປັບປຸງ ສັບຊ້ອນລະບົບການຈັດຕັ້ງກົງຈັກ ຂອງອົງການປົກຄອງເມືອງ ໃຫ້ແທດກັບຄວາມເປັນຈິງ; ພ້ອມກັນນັ້ນ ກໍບັນຈຸສັບຊ້ອນພະນັກງານ ໂດຍສອດຄ່ອງກັບຕຳແໜ່ງງານທີ່ກຳນົດໄວ້, ທັງສອດຄ່ອງກັບສະພາບຕົວຈິງ ກໍຄືຄວາມຮຽກຮ້ອງຕ້ອງການຂອງວຽກງານ ແລະ ໂຄງການຈຸດສຸມພັດທະນາຂອງແຕ່ລະເມືອງ.

- ໃຫ້ຄົ້ນຄວ້າກຳນົດຫລັກການ ລະບຽບການ ແລະ ກົນໄກລະອຽດກ່ຽວກັບແຕ່ງຕັ້ງ ແລະ ຈັດວາງຊັບຊ້ອນພະນັກງານ ເຂົ້າໃສ່ຕຳແໜ່ງງານຕ່າງໆ ຕາມມາດຕະຖານທີ່ກຳນົດໄວ້ໃນກົງຈັກບໍລິຫານຂອງອົງການປົກຄອງເມືອງ.

3.6. ໃຫ້ສືບຕໍ່ຄົ້ນຄວ້າກ່ຽວກັບການສ້າງຕັ້ງນະຄອນ ແລະ ເທສະບານ ໂດຍມີການຕີຄວາມໝາຍ ແລະ ກຳນົດພາລະບົດບາດພື້ນຖານໃຫ້ຈະແຈ້ງ; ພ້ອມກັນນັ້ນກໍໃຫ້ກຳນົດຈຳນວນບ້ານ ແລະ ຈຳນວນປະຊາກອນ ທີ່ຂຶ້ນກັບເຂດປົກຄອງຂອງເມືອງໜຶ່ງໆໃຫ້ເໝາະສົມ ເພື່ອສາມາດກະຈາຍການພັດທະນາ ແລະ ປົກຄອງໄດ້ ຢ່າງແທດເຖິງ.

3.7.ໃຫ້ຄົ້ນຄວ້າກ່ຽວກັບການ ໃຫ້ເມືອງມີຮ່ອງງົບປະມານຮັບໃຊ້ວຽກງານ ປກຊ-ປກສ, ສຸມໃສ່ສ້າງເມືອງໃຫ້ເປັນຫົວໜ່ວຍປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ເຂັ້ມແຂງ, ມີຄວາມສາມາດເຄື່ອນໄຫວຢ່າງເປັນເອກະລາດ; ສ້າງເມືອງໃຫ້ເປັນແຫລ່ງສະໜອງທີ່ບໍ່ບົກແຫ້ງ ທາງດ້ານກຳລັງພົນ ແລະ ກຳລັງວັດຖຸ ໃຫ້ແກ່ວຽກງານ ປກຊ-ປກສ ຢູ່ຮາກຖານ.

4. ສ້າງບ້ານເປັນຫົວໜ່ວຍພັດທະນາ.

4.1. ໃຫ້ແຕ່ລະທ້ອງຖິ່ນສືບຕໍ່ຍູ້ແຮງຂະບວນການສ້າງບ້ານພັດທະນາຕາມ 4 ເນື້ອໃນ ແລະ 4 ຄາດໝາຍ; ຖືອັນນີ້ເປັນໜ້າທີ່ຈຸດສຸມຂອງຂະບວນການແຂ່ງຂັນ " ຮັກຊາດ-ພັດທະນາ " ໃນຊຸມປີຕໍ່ໜ້າ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຕາມຄາດໝາຍ ແລະ ບັນລຸເປົ້າໝາຍ

ລວມອັນເໝາະສົມ ເພື່ອສ້າງເປັນບ້ານທີ່ມີມາດຕະຖານຕາມທີ່ກົດໝາຍກຳນົດໄວ້ ແລະ ມີເງື່ອນໄຂສ້າງເປັນບ້ານພັດທະນາ; ໃຫ້ເອົາໃຈໃສ່ຈັດສັນບ້ານໃຫ້ແທດເໝາະກັບລະບົບພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມວັດທະນະທຳ ເພື່ອນຳໃຊ້ໃຫ້ເກີດປະໂຫຍດສູງສຸດ; ພ້ອມກັນນັ້ນກໍໃຫ້ກຳນົດເຂດຈັດຕັ້ງ ກຸ່ມບ້ານໃຫ້ຈະແຈ້ງ ເປັນຕົ້ນແມ່ນກຸ່ມບ້ານໃນເຂດພື້ນທີ່ຊາຍແດນ ແລະ ກຸ່ມບ້ານອື່ນໆ ທີ່ມີການພັດທະນາແບບຍືນຍົງ ແລະ ຮັບໃຊ້ຈຸດປະສົງເປົ້າໝາຍອັນແນ່ນອນ.

- ກຳນົດເຂດຈຸດສຸມພັດທະນາຂອງສູນກາງ, ຂອງແຂວງ, ຂອງເມືອງໃຫ້ແທດກັບທ່າແຮງ ແລະ ຄວາມຈຳເປັນຕົ້ນອີກ, ພ້ອມນັ້ນ ກໍຂຶ້ນໂຄງການພັດທະນາ ແລະ ຈັດເຂົ້າໃນແຜນພັດທະນາ ແລະ ແຜນງົບປະມານໃນແຕ່ລະປີ ເພື່ອຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງໃຫ້ເກີດຜົນເປັນຮູບປະທຳ.

4.2. ສືບຕໍ່ປະຕິບັດລະບອບເລືອກຕັ້ງນາຍບ້ານ; ພ້ອມກັນນັ້ນ ກໍໃຫ້ປະຕິບັດລະບອບ ແຕ່ງຕັ້ງພະນັກງານ ໄປເປັນນາຍບ້ານໃນບ່ອນທີ່ຈຳເປັນ.

4.3. ປະຕິບັດລະບອບໃຫ້ເງິນອຸດໜູນແກ່ນາຍບ້ານ ແລະ ຄະນະ; ເພີ່ມຈຳນວນເງິນອຸດໜູນຂຶ້ນຕື່ມໃຫ້ເໝາະສົມກັບສະພາບເສດຖະກິດ-ຊີວິດການເປັນຢູ່ ກໍຄືກັບຄວາມຮັບຜິດຊອບ ຂອງເຂົາເຈົ້າ, ນອກນັ້ນກໍໃຫ້ມີນະໂຍບາຍຊຸກຍູ້ສົ່ງເສີມທາງດ້ານວັດຖຸ ແລະ ຈິດໃຈຕື່ມອີກ ສຳລັບຮັບໃຊ້ການເຄື່ອນໄຫວຕົວຈິງ. ນອກຈາກນາຍບ້ານ ແລະ ຄະນະບ້ານແລ້ວ ກໍໃຫ້ຄົ້ນຄວ້າລະບອບນະໂຍ

ບາຍອຸດໜູນຕໍ່ເປົ້າໝາຍອື່ນໆ ທີ່ເຮັດວຽກໃນອົງການປົກຄອງບ້ານ ເພື່ອຊຸກຍູ້ຄວາມເປັນເຈົ້າການໃນການປະຕິບັດໜ້າທີ່.

4.4. ສືບຕໍ່ຄົ້ນຄວ້າກ່ຽວກັບການໃຫ້ຖານະນາມແກ່ນາຍບ້ານ ຊຶ່ງເປັນຫົວໜ້າອົງການປົກຄອງທ້ອງຖິ່ນຂັ້ນລຸ່ມສຸດ ເພື່ອລະບຸໄວ້ໃນກົດໝາຍ.

4.5.ຄົ້ນຄວ້າກຳນົດລະບົບການຈັດຕັ້ງກົງຈັກຂອງບ້ານຢູ່ໃນຕົວເມືອງເທສະບານ ແລະ ບ້ານຢູ່ຊົນນະບົດ ລວມທັງຈຳນວນບຸກຄະລາກອນທີ່ເຮັດວຽກບໍລິຫານ-ຄຸ້ມຄອງບ້ານ ໃຫ້ມີຄວາມເປັນເອກະພາບ ແລະ ເໝາະສົມກັບສະພາບຕົວຈິງ.

4.6. ຄົ້ນຄວ້າກຳນົດລະບຽບການອອກເອກະສານ ຫລື ອອກໜັງສືຢັ້ງຢືນຂອງບ້ານ ພ້ອມທັງກຳນົດແບບຟອມ-ເນື້ອໃນຂອງເອກະສານ ໃຫ້ເປັນລະບົບ-ເອກະພາບ ໂດຍແມ່ນອົງການລັດກ່ຽວຂ້ອງ ເປັນຜູ້ກຳນົດ, ທັງຜູກຂາດການພິມ ແລະ ຕິດສະແຕັມ ເພື່ອຈຳໜ່າຍ.

4.7. ກຳນົດຫົວໜ່ວຍເກັບລາຍຮັບ (ພາສີອາກອນ) ໃຫ້ແກ່ບ້ານ ແລະ ອອກລະບຽບການຈັດເກັບໃຫ້ຮັດກຸມ; ພ້ອມກັນນັ້ນ ກໍກຳນົດລະບຽບການໃຊ້ຈ່າຍ ສຳລັບການຄຸ້ມຄອງ-ບໍລິຫານວຽກງານຂອງບ້ານ ລວມທັງລະບຽບການສ້າງຄັງ, ສ້າງກອງທຶນ, ການເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆຂອງບ້ານ ໃຫ້ຈະແຈ້ງໂປ່ງໃສ.

4.8. ປະຕິບັດລະບອບການຝຶກອົບຮົມໄລຍະສັ້ນ ເພື່ອຍົກລະດັບຄວາມຮູ້ດ້ານທິດສະດີແນວທາງການເມືອງ-ການປົກຄອງ, ກົດໝາຍ ແລະຄວາມຮູ້ພື້ນຖານດ້ານອື່ນໆ ໃຫ້ແກ່ນາຍບ້ານ ແລະ ບຸກຄະລະກອນຄຸ້ມຄອງ-ບໍລິຫານບ້ານ ຢ່າງເປັນລະບົບ ປົກກະຕິ.

- ໃຫ້ແຕ່ລະທ້ອງຖິ່ນ ຂຶ້ນແຜນກຳນົດສ້າງບຸກຄະລະກອນສືບທອດຢູ່ຂັ້ນບ້ານ, ເພື່ອມີຜູ້ເປັນນາຍບ້ານ, ເປັນພົດທະນາກອນຢູ່ບ້ານ ແລະ ເປັນຫລັກແຫລ່ງນຳພາ, ຄຸ້ມຄອງບໍລິຫານບ້ານສືບຕໍ່ກັນໄປ.

4.9. ຄົ້ນຄວ້າສ້າງຕັ້ງສະຖານີບໍລິການ ຫລື ສະຖານີສົ່ງເສີມການຜະລິດປະຈຳບ້ານຈຸດສຸມພັດທະນາ ເພື່ອໃຫ້ຄຳແນະນຳ ແລະ ໃຫ້ການບໍລິການດ້ານວິຊາການແກ່ຊາວບ້ານ ໃນການຜະລິດເປັນສິນຄ້າ ໂດຍໃຫ້ສະຖານີ ແລະ ພະນັກງານຢູ່ທີ່ນັ້ນ ຂຶ້ນກັບເມືອງ.

4.10. ເພີ່ມທະວີການຮັກສາຄວາມສະຫງົບ ຕິດແທ້ກັບການແກ້ໄຂປະກົດການຫຍໍ້ທໍ້ ຢູ່ຮາກຖານບ້ານ, ແຕ່ລະບ້ານ ຕ້ອງຄຸ້ມຄອງພົນລະເມືອງຂອງຕົນໃຫ້ແໜ້ນ ແລະ ຄວບຄຸມການເຄື່ອນຍ້າຍພົນລະເມືອງ ໃຫ້ເຂັ້ມງວດ; ຈັດຕັ້ງປະຕິບັດທິດນຳກ່ຽວກັບການສ້າງບ້ານປ້ອງກັນ ແລະ ກຸ່ມບ້ານສູ້ຮົບຕິດລຽນ ເພື່ອສ້າງທ່າສະໜາມສົງຄາມປະຊາຊົນໃຫ້ເຂັ້ມແຂງ.

໗. ມາດຕະການຈັດຕັ້ງປະຕິບັດມະຕິບັດມະຕິສະບັບນີ້.

1. ມອບໃຫ້ລັດຖະບານ ຄົ້ນຄວ້າອອກດຳລັດໃໝ່ (ປ່ຽນແທນດຳລັດ 01/ນຍ) ເພື່ອຜັນຂະຫຍາຍເນື້ອໃນ ຂອງມະຕິສະບັບນີ້ເປັນອັນລະອຽດສາມາດເປັນບ່ອນອີງ ສຳລັບການຈັດຕັ້ງປະຕິບັດຢູ່ໃນຂະແໜງການ-ອົງການອ້ອມຂ້າງສູນກາງ ແລະ ທຸກທ້ອງຖິ່ນ ໃນທົ່ວປະເທດ.

2. ມອບໃຫ້ຄະນະເລຂາທິການສູນກາງພັກ ແຕ່ງຕັ້ງຄະນະສະເພາະກິດ ເພື່ອສືບຕໍ່ດຳເນີນການຄົ້ນຄ້ວາ ປັບປຸງ ດັດແກ້ບັນດານິຕິກຳ ແລະ ລະບຽບການກົນໄກທີ່ບໍ່ອຳນວຍ; ພ້ອມນັ້ນກໍສ້າງນິຕິກຳ, ລະບຽບການ ແລະ ກົນໄກອັນໃໝ່ອອກ ເພື່ອອຳນວຍໃຫ້ແກ່ການສ້າງແຂວງ, ສ້າງເມືອງ, ສ້າງບ້ານຕາມທິດນຳດັ່ງກ່າວນັ້ນໃຫ້ເປັນຈິງ.

3. ໃຫ້ຄະນະສະເພາະກິດທີ່ຕັ້ງຂຶ້ນ ຄົ້ນຄວ້ານຳສະເໜີແຜນການຈັດຕັ້ງເຮັດທົດລອງ ຕໍ່ກົມການເມືອງ ເພື່ອຮັບຮອງເອົາ, ຈາກນັ້ນ ຈຶ່ງເລີ່ມເຮັດທົດລອງຢ່າງມີຈຸດສຸມ ເລິກເຊິ່ງຮອບດ້ານ, ເມື່ອຮອດສິ້ນສົກປີ 2012-2013 ໃຫ້ສະຫລຸບສັງລວມສະພາບ ແລະ ຖອດເປັນບົດຮຽນລາຍງານຕໍ່ກົມການເມືອງ.

4. ໃຫ້ຄະນະສະເພາະກິດ ສົມທົບກັບອົງການ-ຂະແໜງການກ່ຽວຂ້ອງ ຈັດຕັ້ງການສຳມະນາບັນຫາທີ່ເຫັນວ່າຈຳເປັນສຳລັບການສະຫລຸບສັງລວມເປັນບົດຮຽນ-ເປັນທິດສະດີພຶດຕິກຳ ຂອງພັກເຮົາ ກ່ຽວກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ.

ຕ.ກົມການເມືອງສູນກາງພັກ

[illegible]

ຈູມມາລີ ໄຊຍະສອນ